**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ລັດຖະບານ** ເລກທີ 315 /ລບ

ນະຄອນຫຼວງວຽງຈັນ, ວັນທີ 16.08.2016.

# ດຳລັດ
# ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງ
# ການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບເລກທີ 63/ສພຊ ລົງວັນທີ 8 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີກະຊວງພາຍໃນ, ສະບັບເລກທີ 10/ພນ, ລົງວັນທີ 30 ມິຖຸນາ 2016.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ ເພື່ອເຮັດໃຫ້ນັກບວດ, ນັກສອນສາສະໜາ, ສາສະນິກະຊົນ ແລະ ການຈັດຕັ້ງສາສະໜາ ເຄື່ອນໄຫວຖືກຕ້ອງ ຕາມກົດໝາຍ, ລະບຽບການ ແລະ ຫຼັກທຳ ຄຳສັ່ງສອນ, ແນໃສ່ປົກປັກຮັກສາ ແລະ ເສີມຂະຫຍາຍ ວັດທະນະທຳອັນດີງາມຂອງຊາດ, ເພີ່ມທະວີຄວາມສາມັກຄີກົມກຽວ ລະຫວ່າງ ບຸກຄົນເຊື່ອຖືສາສະໜາຕ່າງໆ ພ້ອມກັນປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

ມາດຕາ 2. **ສາສະໜາ**

ສາສະໜາ ແມ່ນຮູບຖານຈິດສຳນຶກສັງຄົມ ຫຼື ຫຼັກທຳ ຄຳສັ່ງສອນທີ່ສາສະດາ ຂອງແຕ່ລະສາສະໜາ ຄົ້ນພົບ ແລະ ນຳມາສັ່ງສອນມະນຸດໃຫ້ເປັນຄົນດີ, ມີທີ່ຍຶດໝັ້ນທາງຈິດໃຈ, ມີຄວາມສາມັກຄີ, ມີບັນທັດຖານໃນການປະພຶດ, ປະຕິບັດ ແລະ ຢູ່ຮ່ວມກັນໂດຍສັນຕິ.

ມາດຕາ 3. **ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ສາສະນະວັດຖຸ** ໝາຍເຖິງ ວັດຖຸທີ່ເປັນຊັບສິນຂອງສາສະໜາ;
2. **ສາສະນະສະຖານ** ໝາຍເຖິງ ສະຖານທີ່ທາງດ້ານສາສະໜາເຊັ່ນ: ວັດ, ພັດທະສີມາ, ໂບດ, ສຸເຫຼົ່າ, ທຳມະສະພາ ແລະ ບ່ອນສັກກາລະບູຊາ;
3. **ນັກບວດ** ໝາຍເຖິງ ພົນລະເມືອງ ຜູ້ສະໝັກໃຈດຳລົງຊີວິດຕາມຫຼັກທຳ ຄຳສັ່ງສອນ ຂອງສາສະໜາ ທີ່ຕົນເຊື່ອຖື;
4. **ສາສະນິກະຊົນ** ໝາຍເຖິງ ຜູ້ເຊື່ອຖືສາສະໜາໃດໜຶ່ງ;
5. **ກົດບັນຍັດ** ໝາຍເຖິງ ວິໄນ, ກົດລະບຽບ ແລະ ຂໍ້ຫ້າມ ຂອງສາສະໜາໃດໜຶ່ງ;
6. **ພິທີກຳທາງສາສະໜາ** ໝາຍເຖິງ ການເຮັດພິທີທາງສາສະໜາຕາມກົດບັນຍັດ ຂອງແຕ່ລະສາສະໜາ;
7. **ພິທີທາງສາສະໜາ** ໝາຍເຖິງ ການເຮັດພິທີຕາມຮີດຄອງປະເພນີ ຂອງສາສະໜາທີ່ເຄີຍປະຕິບັດມາ;
8. **ພັດທະສີມາ** ໝາຍເຖິງ ສະຖານທີ່ປະກອບພິທີກຳຂອງພະພິກຂຸສົງ.

ມາດຕາ 4. **ນະໂຍບາຍຂອງລັດ ກ່ຽວກັບ ວຽກງານສາສະໜາ**

ລັດມີນະໂຍບາຍ ກ່ຽວກັບ ວຽກງານສາສະໜາ ດັ່ງນີ້:

1. ເຄົາລົບສິດ ແລະ ເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖື ສາສະໜາຂອງພົນລະເມືອງ, ບໍ່ອະນຸຍາດໃຫ້ ບຸກຄົນ, ການຈັດຕັ້ງ ຫຼື ນິຕິບຸກຄົນ ຊີ້ຈ້າງຈອບອອຍ ຫຼື ບັງຄັບ ໃຫ້ພົນລະເມືອງເຊື່ອຖືສາສະໜາ ຫຼື ການເຊື່ອຖືໃດໜຶ່ງ;
2. ເຄົາລົບ ແລະ ປົກປ້ອງການເຄື່ອນໄຫວອັນຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງການຈັດຕັ້ງສາສະໜາ, ນັກບວດ, ນັກສອນສາສະໜາ ແລະ ສາສະນິກະຊົນ ລວມທັງປຸກລະດົມ, ສົ່ງເສີມໃຫ້ເຂົາເຈົ້າເຂົ້າຮ່ວມໃນການເຄື່ອນໄຫວທີ່ເປັນປະໂຫຍດແກ່ປະເທດຊາດ ແລະ ປະຊາຊົນ ໂດຍບໍ່ໃຫ້ມີການແບ່ງແຍກສາສະໜາ ແລະ ປະຊາຊົນ;
3. ຊຸກຍູ້ໃຫ້ສາສະນິກະຊົນ ຂອງສາສະໜາຕ່າງໆ ປະຕິບັດສິດ ແລະ ພັນທະຂອງພົນລະເມືອງເທົ່າທຽມກັນ, ສາມັກຄີກັນເຮັດໜ້າທີ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;

4. ເອົາໃຈໃສ່ຍົກລະດັບຄວາມຮູ້ດ້ານວິທະຍາສາດ, ທຳມະຊາດ ແລະ ສັງຄົມ ໃຫ້ແກ່ປະຊາຊົນບັນດາເຜົ່າ ເພື່ອໃຫ້ເຂົາເຈົ້າຄ່ອຍໆ ປະລະຮີດຄອງປະເພນີ ທີ່ສົ່ງຜົນສະທ້ອນບໍ່ດີຕໍ່ຄວາມສາມັກຄີ, ການຜະລິດ ແລະ ການດຳລົງຊີວິດ ຂອງບັນດາເຜົ່າ ກໍຄືຂອງຊາດ ພ້ອມທັງສ້າງຄວາມສີວິໄລທາງດ້ານຈິດໃຈເທື່ອລະກ້າວ.

**ມາດຕາ 5. ຫຼັກການ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສາສະໜາ**

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງການຈັດຕັ້ງສາສະໜາໃຫ້ປະຕິບັດຕາມຫຼັກພື້ນຖານດັ່ງນີ້:

1. ສອດຄ່ອງ ກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;
2. ຖືກຕ້ອງ ຕາມເນື້ອໃນ, ຫຼັກທຳ, ຄຳສັ່ງສອນຂອງສາສະໜາ;
3. ຮັບປະກັນ ລັກສະນະຊາດ, ວິທະຍາສາດ, ຄວາມກ້າວໜ້າ ແລະ ມະຫາຊົນ; ຮັກສາມູນເຊື້ອວັດທະນະທຳອັນດີງາມຂອງຊາດ;
4. ຮັບປະກັນ ຄວາມສາມັກຄີ ປອງດອງຊາດ, ສາສະໜາ, ຊັ້ນຄົນ ແລະ ປະຊາຊົນບັນດາເຜົ່າ;
5. ຮັບປະກັນຄວາມປອດໄພ, ປະຢັດ, ສອດຄ່ອງກັບມູນເຊື້ອ, ສີສັນທາງວັດທະນະທຳຂອງຊາດ, ປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມ.

**ມາດຕາ 6. ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ນັກບວດ, ນັກສອນສາສະໜາ, ສາສະນິກະຊົນ ແລະ ການຈັດຕັ້ງສາສະໜາ ຢູ່ ສປປ ລາວ.

## ໝວດທີ 2
## ການຈັດຕັ້ງສາສະໜາ

**ມາດຕາ 7. ການຈັດຕັ້ງສາສະໜາ**

ການຈັດຕັ້ງສາສະໜາ ແມ່ນການຈັດຕັ້ງໜຶ່ງຂອງຜູ້ເຊື່ອຖືຕາມຫຼັກທຳ ຄຳສັ່ງສອນ, ຄຳພີ ແລະ ພິທີກຳອັນດຽວກັນ ຕາມໂຄງປະກອບໃດໜຶ່ງທີ່ແນ່ນອນ ແລະ ໄດ້ຮັບການຮັບຮອງຈາກອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ.

ບຸກຄະລາກອນ ທີ່ຈະຖືກຄັດເລືອກ ຫຼື ແຕ່ງຕັ້ງ ເຂົ້າໃນຄະນະຮັບຜິດຊອບການຈັດຕັ້ງສາສະໜາ ຕ້ອງສະເໜີຕໍ່ກະຊວງພາຍໃນ, ພະແນກພາຍໃນແຂວງ, ນະຄອນ, ຫ້ອງການພາຍໃນເມືອງ, ເທດສະບານ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ.

**ມາດຕາ 8. ການຮັບຮອງ ການຈັດຕັ້ງສາສະໜາ**

ທຸກການຈັດຕັ້ງສາສະໜາ ຢູ່ ສປປ ລາວ ຈະເຄື່ອນໄຫວໄດ້ກໍຕໍ່ເມື່ອຖືກຮັບຮອງຢ່າງເປັນທາງການ ຈາກອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ.

ກະຊວງພາຍໃນເປັນຜູ້ຮັບຮອງການຈັດຕັ້ງສາສະໜາທີ່ເຄື່ອນໄຫວກວມເອົາຫຼາຍແຂວງ; ເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ຮັບຮອງການຈັດຕັ້ງສາສະໜາທີ່ເຄື່ອນໄຫວຢູ່ ພາຍໃນແຂວງ, ນະຄອນ ຕາມການສະເໜີຂອງພະແນກພາຍໃນແຂວງ, ນະຄອນ.

**ມາດຕາ 9. ເອກະສານຢັ້ງຢືນ**

ການຈັດຕັ້ງສາສະໜາ, ນັກບວດ ແລະ ນັກສອນສາສະໜາ ຢູ່ ສປປ ລາວ ໃຫ້ມີເອກະສານຢັ້ງຢືນ ດັ່ງນີ້:

1. ການຈັດຕັ້ງສາສະໜາທີ່ເຄື່ອນໄຫວກວມເອົາຫຼາຍແຂວງຕ້ອງມີໃບອະນຸຍາດຈາກກະຊວງພາຍໃນ, ການຈັດຕັ້ງສາສະໜາຢູ່ທ້ອງຖິ່ນ ຕ້ອງມີໃບອະນຸຍາດຈາກເຈົ້າແຂວງ, ເຈົ້າຄອງນະຄອນ;
2. ພະສົງ, ສາມະເນນ, ນັກບວດ, ພໍ່ຂາວ ແລະ ແມ່ຂາວ ໃຫ້ມີປື້ມສຳມະໂນ ແລະ ໜັງສືສຸດທິ;
3. ຄູສອນສາສະໜາ ຂອງແຕ່ລະສາສະໜາ ຕ້ອງມີບັດຢັ້ງຢືນຈາກການຈັດຕັ້ງສາສະໜາຕົນ.

**ມາດຕາ 10. ຕາປະທັບ**

ການຈັດຕັ້ງສາສະໜາທີ່ໄດ້ຮັບຮອງຢ່າງເປັນທາງການ ຕາມກົດໝາຍ ແລະ ລະບຽບການແລ້ວ ສາມາດມີຕາປະທັບເພື່ອໃຊ້ໃນການເຄື່ອນໄຫວວຽກງານຂອງຕົນ.

## ໝວດທີ 3
## ການເຄື່ອນໄຫວສາສະໜາ

**ມາດຕາ 11. ການເຄື່ອນໄຫວສາສະໜາ**

ການຈັດຕັ້ງສາສະໜາສາມາດເຄື່ອນໄຫວ ດັ່ງນີ້:

1. ຈັດຕັ້ງພິທີກຳ ແລະ ກິດຈະກຳທາງສາສະໜາ ໃຫ້ຖືກຕ້ອງຕາມເນື້ອໃນຫຼັກທຳ ຄຳສັ່ງສອນ ຂອງສາສະໜາ ແລະ ຢູ່ໃນສະຖານທີ່ ທີ່ໄດ້ຮັບອະນຸຍາດ;
2. ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ປອງດອງປະຊາຊົນບັນດາເຜົ່າ, ສາສະໜາ ແລະ ຊັ້ນຄົນໃນສັງຄົມໃຫ້ປະກອບສ່ວນໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;
3. ບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ ແລະ ວັດຖຸບູຮານ;
4. ເຄື່ອນໄຫວກິດຈະກຳຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 12. ການເຄື່ອນໄຫວວຽກງານສາສະໜາ**

ນັກບວດ, ນັກສອນສາສະໜາ ແລະ ສາສະນິກະຊົນ ຂອງການຈັດຕັ້ງສາສະໜາ ສາມາດເຄື່ອນໄຫວວຽກງານສາສະໜາ ດັ່ງນີ້:

1. ປະຕິບັດທຳ, ເຂົ້າຮ່ວມພິທີກຳ ແລະ ກິດຈະກຳຕ່າງໆ ທາງສາສະໜາ;
2. ເຄົາລົບສິດໃນການເຊື່ອຖື ຫຼື ບໍ່ເຊື່ອຖື ສາສະໜາຂອງຄົນອື່ນ, ບໍ່ກີດຂວາງການປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວ, ເຄື່ອນໄຫວຖືກຕ້ອງຕາມຫຼັກທຳ ຄຳສັ່ງສອນ, ກົດໝາຍ ແລະ ລະບຽບການ;
3. ຈັດຕັ້ງພິທີກຳ, ເຜີຍແຜ່ເນື້ອໃນຫຼັກທຳ ຄຳສັ່ງສອນ ຂອງສາສະໜາ ຢູ່ໃນສະຖານທີ່ທີ່ໄດ້ຮັບການສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
4. ເຄື່ອນໄຫວກິດຈະກຳຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ໃນກໍລະນີເຄື່ອນໄຫວຢູ່ນອກສາສະນະສະຖານ ຕ້ອງໄດ້ຮັບອະນຸຍາດ ຈາກອົງການປົກຄອງບ້ານນັ້ນ.

ໃນກໍລະນີເຄື່ອນໄຫວຢູ່ບ້ານອື່ນ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າເມືອງບ່ອນທີ່ຈະໄປເຄື່ອນໄຫວນັ້ນ.

ໃນກໍລະນີເຄື່ອນໄຫວຢູ່ເມືອງອື່ນ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າແຂວງ, ເຈົ້າຄອງນະຄອນບ່ອນທີ່ຈະໄປເຄື່ອນໄຫວນັ້ນ;

ໃນກໍລະນີເຄື່ອນໄຫວຢູ່ແຂວງອື່ນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງພາຍໃນ.

**ມາດຕາ 13. ການຂໍອະນຸຍາດບວດ**

ພົນລະເມືອງລາວ ທີ່ມີຈຸດປະສົງເຂົ້າບວດ ເກີນສາມເດືອນຂຶ້ນໄປ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າເມືອງ, ຫົວໜ້າເທດສະບານ ໂດຍການເຫັນດີຈາກຜູ້ປົກຄອງ, ຜົວ ຫຼື ເມຍ, ການຈັດຕັ້ງທາງສາສະໜາ ທີ່ຕົນຈະເຂົ້າບວດ ແລະ ອົງການປົກຄອງບ້ານ ບ່ອນທີ່ຕົນດຳລົງຊີວິດຢູ່.

ໃນກໍລະນີເຂົ້າບວດ ສາມເດືອນລົງມາ ຕ້ອງໄດ້ຮັບອະນຸຍາດຈາກນາຍບ້ານ ໂດຍການເຫັນດີຈາກຜູ້ປົກຄອງ, ຜົວ ຫຼື ເມຍ.

ສຳລັບຄົນຕ່າງປະເທດ ທີ່ມີຈຸດປະສົງເຂົ້າບວດ ແລະ ປະຕິບັດທຳ ຢູ່ ສປປ ລາວ ຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການພາຍໃນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 14. ການນຳເຂົ້າ, ການພິມເຜີຍແຜ່ ສື່ສິ່ງພິມ, ສື່ທາງເອເລັກໂຕນິກ ທາງສາສະໜາ**

ການນຳເຂົ້າ ແລະ ການພິມເຜີຍແຜ່ສື່ສິ່ງພິມ ແລະ ສື່ທາງເອເລັກໂຕນິກ ທາງສາສະໜາ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍ ການພິມຈຳໜ່າຍ, ກົດໝາຍ ວ່າດ້ວຍ ສື່ມວນຊົນ, ກົດໝາຍ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 15. ການປົກປັກຮັກສາ ມໍລະດົກ ແລະ ວັດທະນະທຳ ຂອງຊາດ**

ບັນດາສາສະນິກະຊົນ ແລະ ການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວຢູ່ ສປປ ລາວ ມີໜ້າທີ່ປົກປັກຮັກສາປູຊະນີຍະສະຖານ, ບູຮານວັດຖຸ ທີ່ເປັນມໍລະດົກທາງວັດທະນະທຳ, ປະຫວັດສາດ, ທຳມະຊາດ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ຊົນເຜົ່າ ແລະ ທ້ອງຖິ່ນ.

**ມາດຕາ 16. ການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ**

ການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນສາສະນະສະຖານ ຕ້ອງໄດ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ມໍລະດົກແຫ່ງຊາດ, ກົດໝາຍ ວ່າດ້ວຍ ຜັງເມືອງ, ກົດໝາຍ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ.

ສຳລັບ ລະບຽບການ ການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ ໃຫ້ກະຊວງພາຍໃນ ກຳນົດໄວ້ຕ່າງຫາກ.

**ມາດຕາ 17. ອົງການອະນຸມັດ ການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ**

ກະຊວງພາຍໃນ ເປັນຜູ້ອະນຸມັດກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ ເຊັ່ນ: ວັດ, ໂບດ, ທຳມະສະພາ ແລະ ສຸເຫຼົ່າ ຕາມການສະເໜີ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ.

ນາຍົກລັດຖະມົນຕີ ເປັນຜູ້ອະນຸມັດກໍ່ສ້າງພັດທະສີມາ ຕາມການສະເໜີ ຂອງລັດຖະມົນຕີກະຊວງພາຍໃນ.

**ມາດຕາ 18. ການຄຸ້ມຄອງຊັບສົມບັດ ຂອງສາສະໜາ**

ຊັບສົມບັດ ຂອງແຕ່ລະສາສະໜາ ທັງສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ຕ້ອງຈົດທະບຽນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19. ການໄປເຄື່ອນໄຫວວຽກງານສາສະໜາ ຢູ່ຕ່າງປະເທດ**

ພະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ, ນັກບວດ, ນັກສອນສາສະໜາ, ສາສະນິກະຊົນ ແລະ ການຈັດຕັ້ງສາສະໜາ ຢູ່ ສປປ ລາວ ທີ່ມີຈຸດປະສົງເຄື່ອນໄຫວ ຫຼື ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ, ແລກປ່ຽນບົດຮຽນ, ທັດສະນະສຶກສາ, ຢ້ຽມຢາມ ສັນທະວະໄມຕີ ຫຼື ງານບຸນສາສະໜາຢູ່ຕ່າງປະເທດດ້ວຍທຶນສ່ວນຕົວ, ທຶນຂອງອົງການຈັດຕັ້ງ ຫຼື ທຶນຂອງຕ່າງປະເທດ ຕ້ອງໄດ້ຮັບການເຫັນດີຈາກຂະແໜງການພາຍໃນ ໂດຍການສະເໜີຂອງອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ສຳລັບ ການໄປສຶກສາວິຊາສະເພາະ ຂອງນັກບວດ ແລະ ນັກສອນສາສະໜາ ຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງສຶກສາທິການ ແລະ ກິລາ ໂດຍການເຫັນດີ ຈາກກະຊວງພາຍໃນ.

**ມາດຕາ 20. ການຮັບ ແລະ ການໃຫ້ການຊ່ວຍເຫຼືອ**

ການຮັບ ແລະ ການໃຫ້ການຊ່ວຍເຫຼືອ ຈາກການຈັດຕັ້ງສາສະໜາ, ສາສະນິກະຊົນຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ຕ້ອງປະຕິບັດຕາມແນວທາງນະໂຍບາຍ, ກົດໝາຍ ແລະ

ລະບຽບການ ຂອງ ສປປ ລາວ.

ສາສະນິກະຊົນ ຫຼື ການຈັດຕັ້ງສາສະໜາ ຢູ່ ສປປ ລາວ ທີ່ມີຈຸດປະສົງ ຂໍ ຫຼື ຮັບເອົາການຊ່ວຍເຫຼືອຈາກບັນດາການຈັດຕັ້ງສາສະໜາ, ສາສະນິກະຊົນຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ທີ່ມີຈຸດປະສົງມອບການຊ່ວຍເຫຼືອໃຫ້ສາສະນິກະຊົນ ຫຼື ການຈັດຕັ້ງສາສະໜາອື່ນໆ ຕ້ອງໄດ້ຜ່ານການເຫັນດີຈາກຂະແໜງການພາຍໃນ.

ການຮັບ ແລະ ການໃຫ້ການຊ່ວຍເຫຼືອທຸກຄັ້ງ ຕ້ອງມີການເຂົ້າຮ່ວມຂອງຂະແໜງການພາຍໃນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ມາດຕາ 21. ການເຊື້ອເຊີນ ແລະ ການຢ້ຽມຢາມ**

ສາສະນິກະຊົນ ແລະ ການຈັດຕັ້ງສາສະໜາມີສິດຕິດຕໍ່ພົວພັນກັບອົງການ ຈັດຕັ້ງສາກົນ, ການຈັດຕັ້ງສາສະໜາ, ສາສະນິກະຊົນ ຫຼື ບຸກຄົນຕ່າງປະເທດ ແຕ່ການຕິດຕໍ່ພົວພັນນັ້ນຕ້ອງປະຕິບັດໃຫ້ຖືກຕ້ອງຕາມນະໂຍບາຍການຕ່າງປະເທດ, ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ສາສະນິກະຊົນ ຫຼື ການຈັດຕັ້ງ ສາສະໜາ ຢູ່ ສປປ ລາວ ທີ່ມີຈຸດປະສົງຢາກເຊື້ອເຊີນຜູ້ແທນທາງສາສະໜາໄປຕ່າງປະເທດ ຫຼື ເຂົ້າມາ ສປປ ລາວ ເພື່ອເຄື່ອນໄຫວເຂົ້າຮ່ວມກອງປະຊຸມ, ສໍາມະນາ, ຝຶກອົບຮົມ, ແລກປ່ຽນບົດຮຽນ, ທັດສະນະສຶກສາ, ຢ້ຽມຢາມສັນທະວະໄມຕີ ຫຼື ງານບຸນສາສະໜາຕ້ອງໄດ້ຮັບການເຫັນດີຈາກຂະແໜງການພາຍໃນ ໂດຍການສະເໜີຂອງອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 22. ການມີສ່ວນຮ່ວມ ແລະ ພັນທະ ຂອງສາສະນິກະຊົນ ແລະ ການຈັດຕັ້ງສາສະໜາ**

ສາສະນິກະຊົນ ແລະ ການຈັດຕັ້ງສາສະໜາ ລ້ວນແຕ່ມີພັນທະເຄົາລົບ ແລະ ປະຕິບັດຕາມລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ; ປົກປັກຮັກສາ, ສົ່ງເສີມມູນເຊື້ອປະຫວັດສາດ, ມໍລະດົກທາງດ້ານວັດທະນະທໍາ, ທໍາມະຊາດ ແລະ ຄວາມເປັນເອກະລັກຂອງຊາດ.

ພະສົງສາມະເນນ, ນັກບວດ, ນັກສອນສາສະໜາ ແລະ ສາສະນິກະຊົນ ຂອງການຈັດຕັ້ງສາສະໜາຕ່າງໆ ມີໜ້າທີ່ເຂົ້າຮ່ວມການເຄື່ອນໄຫວທີ່ເປັນປະໂຫຍດແກ່ປະເທດຊາດ ແລະ ປະຊາຊົນ.

## ໝວດທີ 4
## ການປົກປ້ອງການເຄື່ອນໄຫວ ແລະ ຊັບສົມບັດຂອງສາສະໜາ

**ມາດຕາ 23. ການປົກປ້ອງການເຄື່ອນໄຫວສາສະໜາ**

ລັດເຄົາລົບ ແລະ ປົກປ້ອງການເຄື່ອນໄຫວທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງສາສະນິກະຊົນ ແລະ ຈັດຕັ້ງສາສະໜາ ຢູ່ ສປປ ລາວ.

ພົນລະເມືອງລາວທຸກຄົນ ລ້ວນແຕ່ມີສິດສະເໝີພາບ ຕໍ່ໜ້າກົດໝາຍ ໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາ ຕາມທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ມາດຕາ 24 **ການປົກປ້ອງຊັບສົມບັດຂອງສາສະໜາ**

ລັດຮັບຮູ້ ແລະ ປົກປ້ອງສາສະນະສະຖານ, ສາສະນະວັດຖຸຂອງສາສະໜາທີ່ໄດ້ຈົດທະບຽນຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ໝວດທີ 5
## ຂໍ້ຫ້າມ

ມາດຕາ 25. **ຂໍ້ຫ້າມ ສໍາລັບນັກບວດ, ນັກສອນສາສະໜາ, ສາສະນິກະຊົນ ແລະ ການຈັດຕັ້ງສາສະໜາ**

ຫ້າມນັກບວດ, ນັກສອນສາສະໜາ, ສາສະນິກະຊົນ ແລະ ການຈັດຕັ້ງສາສະໜາ ມີພຶດຕິກໍາ ດັ່ງນີ້:

1. ໂຄສະນາ ແລະ ເຜີຍແຜ່ ເນື້ອໃນທີ່ບິດເບືອນຫຼັກທໍາ ຄໍາສັ່ງສອນ ຂອງສາສະໜາ, ໃສ່ຮ້າຍປ້າຍສີສາສະໜາ ແລະ ຄວາມເຊື່ອອື່ນ; ສິດສອນ, ຮໍ່າຮຽນຫຼັກສູດທີ່ລັດບໍ່ອະນຸຍາດ;
2. ຊື້ຈ້າງຈອບອອຍ ຫຼື ບັງຄັບໃຫ້ພົນລະເມືອງລາວເຊື່ອຖືສາສະໜາ ແລະ ຄວາມເຊື່ອອື່ນ;
3. ສວຍໃຊ້ສິດເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖື ສາສະໜາ ເພື່ອມ້າງເພທໍາລາຍຄວາມສະຫງົບຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ແຕະຕ້ອງສິ່ງແວດລ້ອມ, ຊີວິດ, ສຸຂະພາບ, ກຽດສັກສີ ແລະ ຊັບສົມບັດຂອງຜູ້ອື່ນ; ກີດກັ້ນ, ຂັດຂວາງການປະຕິບັດສິດ ແລະ ພັນທະຂອງພົນລະເມືອງ;
4. ສວຍໃຊ້ສາສະໜາ ເພື່ອສະແຫວງຫາຜົນປະໂຫຍດໃຫ້ແກ່ຕົນ;
5. ເຄື່ອນໄຫວບໍ່ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ລະບຽບການ, ຮີດຄອງປະເພນີອັນດີງາມຂອງຊາດ, ຂັດຂວາງການພັດທະນາ, ແຕະຕ້ອງເຖິງຄວາມສາມັກຄີປອງດອງພາຍໃນຊາດ, ຄວາມສາມັກຄີ ລະຫວ່າງ ບັນດາເຜົ່າ ແລະ ສາສະໜາ; ແຕະຕ້ອງເຖິງຊີວິດ, ຊັບສິນ, ສຸຂະພາບ ແລະ ກຽດສັກສີຂອງຜູ້ອື່ນ;
6. ນໍາເຂົ້າ-ສົ່ງອອກສື່ສິ່ງພິມ, ສື່ເອເລັກໂຕນິກ ທີ່ບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ;
7. ມີພຶດຕິກໍາອື່ນໆທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 26. **ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງສັງຄົມ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງສັງຄົມ ມີພຶດຕິກໍາ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ເນື້ອໃນທີ່ບິດເບືອນຫຼັກທໍາ ຄໍາສັ່ງສອນຂອງສາສະໜາ; ໃສ່ຮ້າຍປ້າຍສີສາສະໜາ ແລະ ຄວາມເຊື່ອອື່ນ;
2. ຊື້ຈ້າງຈອບອອຍ ຫຼື ບັງຄັບໃຫ້ພົນລະເມືອງລາວເຊື່ອຖືສາສະໜາ ຫຼື ຄວາມເຊື່ອອື່ນ;
3. ແບ່ງແຍກສາສະໜາ, ການເຊື່ອຖື ແລະ ປະຊາຊົນບັນດາເຜົ່າ;

4. ສວຍໃຊ້ສິດເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖື ສາສະໜາ ເພື່ອມ້າງເພທຳລາຍຄວາມສະຫງົບຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ, ແຕະຕ້ອງສິ່ງແວດລ້ອມ, ຊີວິດ, ສຸຂະພາບ, ກຽດສັກສີ ແລະ ຊັບສິນບັດຂອງຜູ້ອື່ນ; ກີດກັ້ນ, ຂັດຂວາງການປະຕິບັດສິດ ແລະ ພັນທະຂອງພົນລະເມືອງ;
5. ສວຍໃຊ້ສາສະໜາ ເພື່ອສະແຫວງຫາຜົນປະໂຫຍດໃຫ້ແກ່ຕົນ;
6. ນຳເຂົ້າ-ສົ່ງອອກສື່ສິ່ງພິມ, ສື່ເອເລັກໂຕນິກ ທີ່ບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ;
7. ອະນຸຍາດໃຫ້ການຈັດຕັ້ງສາສະໜາເຄື່ອນໄຫວທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ;
8. ມີພຶດຕິກຳອື່ນໆທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ອົງການຄຸ້ມຄອງ ວຽກງານສາສະໜາ

**ມາດຕາ 27. ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງ ແລະ ກວດກາວຽກງານສາສະໜາຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງພາຍໃນເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ສູນກາງແນວລາວສ້າງຊາດ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນໃນການຈັດຕັ້ງປະຕິບັດ.

ອົງການຄຸ້ມຄອງ ວຽກງານສາສະໜາ ມີດັ່ງນີ້:

- ກະຊວງພາຍໃນ;
- ພະແນກພາຍໃນແຂວງ, ນະຄອນ;
- ຫ້ອງການພາຍໃນເມືອງ, ເທດສະບານ;
- ອົງການປົກຄອງບ້ານ.

**ມາດຕາ 28. ສິດ ແລະ ໜ້າທີ່ ຂອງກະຊວງພາຍໃນ**

ໃນການຄຸ້ມຄອງວຽກງານສາສະໜາ ກະຊວງພາຍໃນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສາສະໜາ;
2. ສ້າງແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ວຽກງານສາສະໜາ;
3. ຄົ້ນຄວ້າສ້າງນິຕິກຳ, ເຜີຍແຜ່ ແລະ ແນະນຳຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງກັບວຽກງານສາສະໜາ;
4. ຄົ້ນຄວ້າ, ອະນຸຍາດ, ຍຸບເລີກການຈັດຕັ້ງຂອງສາສະໜາທີ່ເຄື່ອນໄຫວກວມເອົາຫຼາຍແຂວງ;
5. ຄົ້ນຄວ້າ, ນຳສະເໜີນາຍົກລັດຖະມົນຕີອະນຸມັດກໍ່ສ້າງພັດທະສີມາ;

6. ອະນຸມັດການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນສາສະນະສະຖານ ເຊັ່ນ: ວັດ, ໂບດ, ຫໍາ ນະສະພາ, ສຸເຫຼົ່າ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
7. ພັດທະນາ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ນໍາເອົາຄວາມກ້າວໜ້າທາງດ້ານວິທະຍາ ສາດທໍາມະຊາດ ແລະ ສັງຄົມ ໃຫ້ແກ່ນັກບວດ, ນັກສອນສາສະໜາ ແລະ ສາສະນິກະຊົນ ຂອງບັນດາການຈັດຕັ້ງສາສະໜາ;
8. ຄົ້ນຄວ້າ, ພິຈາລະນາ ແລະ ແກ້ໄຂຄໍາຮ້ອງ, ຄໍາສະເໜີ ກ່ຽວກັບ ວຽກງານສາສະໜາ;
9. ປະສານສົມທົບກັບບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນຕິດຕາມ ແລະ ກວດກາການເຄື່ອນໄຫວ ຂອງການຈັດຕັ້ງສາສະໜາ ແລະ ສາສະນິກະຊົນ;
10. ຄົ້ນຄວ້າ ແລະ ມີຄໍາເຫັນທາງດ້ານເນື້ອໃນ ເພື່ອໃຫ້ກະຊວງທີ່ກ່ຽວຂ້ອງອະນຸຍາດການນໍາເຂົ້າສື່ ສິ່ງພິມ, ພີມປື້ມ, ເອກະສານ, ສັນຍາລັກ ແລະ ປ້າຍຕ່າງໆ ກ່ຽວກັບ ສາສະໜາ;
11. ສັ່ງໂຈະ ຫຼື ຢຸດເຊົາການເຄື່ອນໄຫວຂອງສາສະໜາ, ຄວາມເຊື່ອ ທີ່ບໍ່ສອດຄ່ອງກັບແນວທາງ ນະໂຍບາຍ, ຮີດຄອງປະເພນີອັນດີງາມ, ກົດໝາຍ ແລະ ລະບຽບການ ຕາມຂອບເຂດຄວາມ ຮັບຜິດຊອບຂອງຕົນ ໃນທົ່ວປະເທດ ເປັນຕົ້ນ: ລະເມີດຄວາມໝັ້ນຄົງຂອງຊາດ, ກະທົບຕໍ່ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ຫຼື ເປັນການທໍາລາຍສິ່ງແວດລ້ອມ ຢ່າງຮ້າຍແຮງ; ແຕະຕ້ອງເຖິງຄວາມສາມັກຄີປອງດອງພາຍໃນຊາດ, ຄວາມສາມັກຄີ ລະຫວ່າງ ບັນດາເຜົ່າ ແລະ ສາສະໜາ. ລວມເຖິງ, ຊີວິດ, ຊັບສິນ, ສຸຂະພາບ ແລະ ກຽດສັກສີຂອງຜູ້ອື່ນ.
12. ເກັບກໍາຂໍ້ມູນ ແລະ ສະຖິຕິ ກ່ຽວກັບ ວຽກງານສາສະໜາ;
13. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບ ວຽກງານສາສະໜາ;
14. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານສາສະໜາ ໃຫ້ລັດຖະບານຢ່າງເປັນປົກກະຕິ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນ ທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ຫຼື ຕາມການ ມອບໝາຍ.

**ມາດຕາ 29. ສິດ ແລະ ໜ້າທີ່ ຂອງພະແນກພາຍໃນແຂວງ, ນະຄອນ**

ການຄຸ້ມຄອງວຽກງານສາສະໜາ ພະແນກພາຍໃນແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ລັດຖະທໍາມູນ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານສາສະໜາ;
2. ຄົ້ນຄວ້າ ແລະ ນໍາສະເໜີເຈົ້າແຂວງ, ເຈົ້າຄອງນະຄອນ ພິຈາລະນາ, ອະນຸຍາດ ແລະ ຖອນໃບ ອະນຸຍາດການຈັດຕັ້ງ ແລະ ການເຄື່ອນໄຫວສາສະໜາຢູ່ທ້ອງຖິ່ນ;
3. ຄົ້ນຄວ້າ ແລະ ກວດຜ່ານແຜນການເຄື່ອນໄຫວປະຈໍາປີຂອງການຈັດຕັ້ງສາສະໜາ ຕາມຂອບ ຄວາມຮັບຜິດຊອບຂອງຕົນ;

4. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນສາສະນະສະຖານ ເຊັ່ນ: ວັດ, ໂບດ, ຫໍານະສະພາ, ສຸເຫຼົ່າ ສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອພິຈາລະນາ ແລ້ວນຳສະເໜີຕໍ່ລັດຖະມົນຕີ ກະຊວງພາຍໃນຄົ້ນຄວ້າ, ພິຈາລະນາ ແລະ ອະນຸມັດ;
5. ປະສານສົມທົບກັບຂະແໜງການຂັ້ນແຂວງ, ຂັ້ນເມືອງ ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສາສະໜາ;
6. ເຜີຍແຜ່ ແລະ ແນະນຳໃຫ້ບັນດາຂະແໜງການ ແລະ ການຈັດຕັ້ງສາສະໜາຂັ້ນແຂວງ, ຂັ້ນເມືອງ ກ່ຽວກັບ ວຽກງານສາສະໜາ;
7. ຍ້ອງຍໍ ຫຼື ສະເໜີໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວ ວຽກງານສາສະໜາ, ຜູ້ປະກອບສ່ວນພັດທະນາຊ່ວຍເຫຼືອສັງຄົມ ຫຼື ສະເໜີປະຕິບັດມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;
8. ຄົ້ນຄວ້າ ແລະ ນຳສະເໜີເຈົ້າແຂວງ, ເຈົ້າຄອງນະຄອນ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ແກ້ໄຂ ຄຳຮ້ອງ, ຄຳສະເໜີ ກ່ຽວກັບ ວຽກງານສາສະໜາ;
9. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນ ສັ່ງໂຈະ ຫຼື ຢຸດເຊົາການເຄື່ອນໄຫວສາສະໜາ, ຄວາມເຊື່ອ ທີ່ບໍ່ສອດຄ່ອງກັບແນວທາງນະໂຍບາຍ, ຮີດຄອງປະເພນີອັນດີງາມ, ກົດໝາຍ ແລະ ລະບຽບການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ: ລະເມີດຄວາມໝັ້ນຄົງຂອງຊາດ, ທຳລາຍ ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ສິ່ງແວດລ້ອມຢ່າງຮ້າຍແຮງ; ແຕະຕ້ອງເຖິງຄວາມສາມັກຄີປອງດອງພາຍໃນຊາດ, ຄວາມສາມັກຄີ ລະຫວ່າງ ບັນດາເຜົ່າ ແລະ ສາສະໜາ. ລວມເຖິງ, ຊີວິດ, ຊັບສິນ, ສຸຂະພາບ ແລະ ກຽດສັກສີຂອງຜູ້ອື່ນ.
10. ເກັບກຳຂໍ້ມູນ ແລະ ສະຖິຕິ ກ່ຽວກັບ ວຽກງານສາສະໜາ;
11. ສະຫຼຸບລາຍງານສະພາບການເຄື່ອນໄຫວສາສະໜາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ກະຊວງພາຍໃນ ຢ່າງເປັນປົກກະຕິ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຫຼື ຕາມການມອບ ໝາຍ.

**ມາດຕາ 30. ສິດ ແລະ ໜ້າທີ່ ຂອງຫ້ອງການພາຍໃນເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານສາສະໜາຫ້ອງການພາຍໃນເມືອງ, ເທດສະບານມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ລັດຖະທຳນູນ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານສາສະໜາ;
2. ຄົ້ນຄວ້າ ແລະ ໃຫ້ຂໍ້ມູນ ກ່ຽວກັບ ການຈັດຕັ້ງສາສະໜາ, ການກໍ່ສ້າງສາສະນະສະຖານ, ການ ບູລະນະ ແລະ ການປະຕິສັງຂອນວັດຖຸບູຮານ;
3. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງແຜນການເຄື່ອນໄຫວປະຈຳປີ ຂອງການຈັດຕັ້ງສາສະໜາ ຢູ່ທ້ອງຖິ່ນ;

4. ຄົ້ນຄວ້າ ແລະ ອະນຸຍາດ ການເຄື່ອນໄຫວສາສະໜາຢູ່ພາຍໃນເມືອງ, ເທດສະບານ;
5. ຄົ້ນຄວ້າ ແລະ ນຳສະເໜີເຈົ້າເມືອງ, ຫົວໜ້າເທດສະບານ ເພື່ອອະນຸຍາດໃຫ້ພົນລະເມືອງເຂົ້າບວດ ຫຼື ໃຫ້ນັກບວດລາສິກຂາ;
6. ເຜີຍແຜ່, ແນະນຳ, ຕິດຕາມ ແລະ ກວດກາບັນດາການຈັດຕັ້ງຂັ້ນເມືອງ ໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານສາສະໜາ;
7. ຄົ້ນຄວ້າ ແລະ ນຳສະເໜີອົງການທີ່ກ່ຽວຂ້ອງ ຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວວຽກງານສາສະໜາ ຫຼື ສະເໜີປະຕິບັດມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;
8. ຄົ້ນຄວ້າ ແລະ ນຳສະເໜີເຈົ້າເມືອງ, ຫົວໜ້າເທດສະບານ ຫຼື ອົງການທີ່ກ່ຽວຂ້ອງ ພິຈາລະນາ ແລະ ແກ້ໄຂຄຳຮ້ອງ, ຄຳສະເໜີກ່ຽວກັບສາສະໜາ ຕາມກົດໝາຍ ແລະ ລະບຽບການ;
9. ສະເໜີເຈົ້າເມືອງ, ຫົວໜ້າເທດສະບານສັ່ງໂຈະ ຫຼື ຢຸດເຊົາການເຄື່ອນໄຫວຂອງສາສະໜາ ແລະ ຄວາມເຊື່ອທີ່ບໍ່ສອດຄ່ອງກັບແນວທາງນະໂຍບາຍ, ຮີດຄອງປະເພນີອັນດີງາມ, ກົດໝາຍ ແລະ ລະບຽບການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນເປັນຕົ້ນ: ລະເມີດຄວາມໝັ້ນຄົງຂອງຊາດ, ສ້າງຄວາມບໍ່ສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ຫຼື ສິ່ງແວດລ້ອມຢ່າງຮ້າຍແຮງ; ແຕະຕ້ອງເຖິງຄວາມສາມັກຄີປອງດອງພາຍໃນຊາດ, ຄວາມສາມັກຄີລະຫວ່າງ ບັນດາເຜົ່າ ແລະ ສາສະໜາ. ລວມເຖິງ, ຊີວິດ, ຊັບສິນ, ສຸຂະພາບ ແລະ ກຽດສັກສີຂອງຜູ້ອື່ນ;
9. ສະຫຼຸບ ລາຍງານສະພາບການເຄື່ອນໄຫວວຽກງານສາສະໜາໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ພະແນກພາຍໃນແຂວງ, ນະຄອນຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຫຼື ຕາມການມອບໝາຍ.

**ມາດຕາ 31. ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານສາສະໜາຂອງອົງການປົກຄອງບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ລັດຖະທຳນູນ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສາສະໜາ;
2. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບ ການສະເໜີຂໍອະນຸຍາດກໍ່ສ້າງສາສະນະສະຖານ;
3. ສຶກສາອົບຮົມ ແລະ ແນະນຳປະຊາຊົນໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສາສະໜາ;
4. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບ ການສະເໜີຂໍເຂົ້າບວດ, ລາສິກຂາ ແລະ ການເຄື່ອນໄຫວທາງສາສະໜາພາຍໃນບ້ານຂອງຕົນ ສະເໜີໃຫ້ຫ້ອງການພາຍໃນເມືອງ, ເທດສະບານ ຄົ້ນຄວ້າ, ພິຈາລະນາ ແລະ ນຳສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ ເພື່ອອະນຸຍາດ;

5. ຄົ້ນຄວ້າ, ພິຈາລະນາ, ໄກ່ເກ່ຍ, ແກ້ໄຂ, ຄຳຮ້ອງ ແລະ ຄຳສະເໜີ ກ່ຽວກັບ ວຽກງານສາສະໜາໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ຄົ້ນຄວ້າ, ມີຄຳເຫັນ ແລະ ສະເໜີ ໃຫ້ຫ້ອງການພາຍໃນເມືອງ ເພື່ອນຳສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ ສັ່ງໂຈະ ຫຼື ຢຸດເຊົາການເຄື່ອນໄຫວສາສະໜາ ແລະ ຄວາມເຊື່ອທີ່ບໍ່ສອດຄ່ອງກັບແນວທາງນະໂຍບາຍ, ຮີດຄອງປະເພນີອັນດີງາມ, ກົດໝາຍ ແລະ ລະບຽບການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ: ລະເມີດຕໍ່ຄວາມໝັ້ນຄົງຂອງຊາດ, ທຳລາຍຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ຫຼື ສິ່ງແວດລ້ອມຢ່າງຮ້າຍແຮງ; ແຕະຕ້ອງເຖິງຄວາມສາມັກຄີປອງດອງພາຍໃນຊາດ, ຄວາມສາມັກຄີ ລະຫວ່າງ ບັນດາເຜົ່າ ແລະ ສາສະໜາ. ລວມທັງ, ຊີວິດ, ຊັບສິນ, ສຸຂະພາບ ແລະ ກຽດສັກສີຂອງຜູ້ອື່ນ;
7. ສະຫຼຸບ ລາຍງານການເຄື່ອນໄຫວວຽກງານສາສະໜາໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ຫ້ອງການພາຍໃນເມືອງ, ເທດສະບານຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຫຼື ຕາມການມອບໝາຍ.

**ມາດຕາ 32. ຄວາມຮັບຜິດຊອບ ຂອງອົງການແນວລາວສ້າງຊາດ**

ອົງການແນວລາວສ້າງຊາດມີຄວາມຮັບຜິດຊອບ ດັ່ງນີ້:

1. ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມຂົນຂວາຍການຈັດຕັ້ງສາສະໜາ, ນັກບວດ, ນັກສອນສາສະໜາ ແລະ ສາສະນິກະຊົນໃນການປະຕິບັດແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ເຕົ້າໂຮມສາສະນິກະຊົນຂອງສາສະໜາຕ່າງໆ ເພື່ອສ້າງກ້ອນກຳລັງສາມັກຄີທົ່ວປວງຊົນໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
2. ເປັນຕົວແທນສ່ອງແສງຄວາມຄິດເຫັນ, ຄວາມມຸ່ງມາດປາດຖະໜາ ແລະ ຂໍ້ສະເໜີຂອງສາສະໜາ ແລະ ສາສະນິກະຊົນ ເພື່ອສະເໜີຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ແກ້ໄຂ;
3. ເຂົ້າຮ່ວມ ແລະ ປະກອບສ່ວນໃນການສ້າງນະໂຍບາຍ ແລະ ນິຕິກຳຕ່າງໆ ກ່ຽວກັບ ວຽກງານສາສະໜາ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ຂອງອົງການບໍລິຫານລັດ, ການຈັດຕັ້ງສາສະໜາ ແລະ ສາສະນິກະຊົນຕໍ່ວຽກງານສາສະໜາ, ປະສານສົມທົບກັບອົງການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການປຶກສາຫາລື, ໄກ່ເກ່ຍ ແລະ ແກ້ໄຂ ບັນຫາຂໍ້ຂັດແຍ່ງ ກ່ຽວກັບ ວຽກງານສາສະໜາ;
4. ເຂົ້າຮ່ວມ ແລະ ປະຕິບັດກິດຈະກຳ, ພິທີກຳ, ງານບຸນສິນກິນທານຕ່າງໆທາງສາສະໜາ, ເສີມຂະຫຍາຍມູນເຊື້ອຮັກຊາດ, ວັດທະນະທຳ ແລະ ຮີດຄອງ ປະເພນີອັນດີງາມຂອງປະຊາຊົນລາວບັນດາເຜົ່າ; ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງບັນດາການ ຈັດຕັ້ງສາສະໜາ

ແລະ ສາສະນິກະຊົນ; ຊຸກຍູ້ ແລະ ເສີມຂະຫຍາຍການພົວພັນຮ່ວມມືສາກົນຂອງການຈັດຕັ້ງສາສະໜາ;

5. ປະຕິບັດຄວາມຮັບຜິດຊອບອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 33. ຄວາມຮັບຜິດຊອບ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເຂົ້າຮ່ວມໃນການຄົ້ນຄວ້າ ແລະ ຜັນຂະຫຍາຍແນວທາງນະໂຍບາຍ ກ່ຽວກັບ ວຽກງານສາສະໜາ;
2. ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມຂົນຂວາຍປະຊາຊົນບັນດາເຜົ່າ, ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສາສະໜາ;
3. ຊຸກຍູ້, ແນະນຳ, ສະໜອງຂໍ້ມູນ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານສາສະໜາ;
4. ເປັນເຈົ້າການໃນການຮັກສາຄວາມປອດໄພ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
5. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ;
6. ປະຕິບັດຄວາມຮັບຜິດຊອບອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 34. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 35. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຕໍ່ດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ສັ່ງໂຈະການເຄື່ອນໄຫວ, ຖອນໃບອະນຸຍາດການເຄື່ອນໄຫວ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີໜັກ ຫຼື ເບົາ ແລະ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 36. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງພາຍໃນ ເປັນເຈົ້າການປະສານ ແລະ ສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ອົງການຈັດຕັ້ງສັງຄົມ, ການຈັດຕັ້ງສາສະໜາ, ສາສະນິກະຊົນ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 37. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນດຳລັດສະບັບເລກທີ 92/ນຍ, ລົງວັນທີ 05 ກໍລະກົດ 2002 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ.

ຂໍ້ກຳນົດ ແລະ ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ທອງລຸນ ສີສຸລິດ**